ຄູ່ມືການນຳໃຊ້
ລະບົບແຈ້ງພາສີປະຕູດຽວ

ຂັ້ນຕອນການນຳໃຊ້:	
✓ ການເຂົ້າສູ່ລະບົບ NSWA+ ✓ ລາຍລະອຽດໂດຍຫຍໍ້ ✓ ສິ່ງທີ່ຄວນຮູ້ ✓ ການສ້າງ SD, TD ແລະ LP ✓ ການເຊື່ອມໂຍງ TD ກັບໃບອະນຸຍາດ ✓ ການຄັດຕິດເອກະສານອື່ນໆໃສ່ TD ✓ ການຕີໃບແຈ້ງພາສີເປັນລາຍລະອຽດ ຜ່ານລະບົບ NSWA+ ✓ ກວດກາຄວາມຄາດເຄື່ອນຂອງຂໍ້ມູນ ✓ ການລົງລາຍເຊັນເອເລັກໂທຣນິກ ✓ ການຊຳລະໃບເກັບເງິນ (SOI)	
ໂມດູລ:	**ໃຊ້ສະເພາະ:**
ການແຈ້ງພາສີ	✓ ຜູ້ປະກອບການ ✓ ຕົວແທນຊິບປິ້ງ
ເລກທີ:	
BIVACLAO_NSWA+_UG_VIN_02	
ເວີຊັນ:	**ວັນທີ:**
1.1	ວັນຈັນ ວັນທີ 18 ເດືອນ ກັນຍາ ປີ 2023

ສາລະບານ

ພາກສະເໜີ 2
A. ການເຂົ້າສູ່ລະບົບ Log-in to NSWA+ Platform 5
I ການສ້າງ .SD, TD ແລະ LP 10
1.1 ການສ້າງ SD, TD ແລະ LP 10
1.2 ການຄົ້ນຫາ SD ທີເຄີຍນຳໃຊ້ແລ້ວ ເພື່ອມາສ້າງ SD ໃໝ່ (ກໍລະນີ ສິ້ນຄ້າຄ້າຍຄືກັນ ຫຼື ມີຕົ້ນກຳເນີດສິນຄ້າບ່ອນດຽວກັນ). 14
IIການ .ເຊື່ອມໂຍງ TD ກັບໃບອະນຸຍາດທີ່ກ່ຽວຂ້ອງ ແລະ ການຄັດຕິດເອກະສານອື່ນໆ 15
2.1 ການເຊື່ອມໂຍງ TD ກັບໃບອະນຸຍາດທີ່ກ່ຽວຂ້ອງ 15
2.2 ການຍົກເລີກການເຊື່ອມໂຍງກໍລະນີເຊື່ອມໂຍງຜິດ 16
2.3 ການຄັດຕິດເອກະສານອື່ນໆໃສ່ TD 17
III ການຕີໃບແຈ້ງພາສີເປັນລາຍລະອຽດຜ່ານລະບົບ .NSWA+ ແລະ ກວດກາຄວາມຄາດເຄື່ອນ 19
3.1 ການຕີໃບແຈ້ງພາສີເປັນລາຍລະອຽດ (ໃບ ບ ຫຼື ACDD) 19
3.2 ການຄົ້ນຫາໃບແຈ້ງພາສີເປັນລາຍລະອຽດ (ໃບ ບ ຫຼື ACDD) 22
3.3 ການກວດຄວາມຄາດເຄື່ອນຂອງຂໍ້ມູນ 22
3.4 ການລົງລາຍເຊັນເອເລັກໂທຣນິກ 25
IVໃບ .ສະຫຼຸບການເກັບເງີນ SOI / Billing 27
4.1 ວິທີການກວດເບິ່ງໃບສະຫຼຸບການເກັບເງີນ SOI ໃນ NSWA+ 28

ພາກສະເໜີ

ປື້ມຄູ່ມືສະບັບນີ້ແມ່ນຂຽນຂຶ້ນ ເພື່ອຊ່ວຍໃຫ້ຜູ້ປະກອບການ ແລະ ຕົວແທນຊີບປິ່ງໃຫ້ມີຄວາມເຂົ້າໃຈກ່ຽວກັບຂະບວນການ ແລະ ໜ້າທີ່ຂອງຕົນເອງ ແບບເປັນຂັ້ນຕອນໃນການປະຕິບັດໃຊ້ ລະບົບ NSWA+, ນອກຈາກນັ້ນເຮົາຈະໄດ້ຄຳອະທິບາຍກ່ຽວກັບໜ້າທີ່ ແລະ ປຸ່ມຕ່າງໆທີ່ຢູ່ໃນລະບົບ

ຊື່ສັນຍາລັກ	ເປັນຮູບພາບ	ຄຳອະທິບາຍ
ໂມດູລ໌ ການແຈ້ງພາສີ		ໂມດູລ໌ ການສ້າງ SD/ TD/ LP ເພື່ອແຈ້ງຕໍ່ເຈົ້າໜ້າພາສີ
ໂມດູລ໌ ການອອກໃບບິນ		ໂມດູລ໌ ການອອກໃບບິນ ຫຼັງຈາກເຈົ້າໜ້າທີ່ພາສີໄດ້ປົດສີແລ້ວ
ລະຫັດຜູ້ນຳໃຊ້ (L)		ແມ່ນລະຫັດຜູ້ນຳໃຊ້ລະບົບຂອງເຈົ້າໜ້າທີ່ພາກລັດ, ພະນັກງານຈາກ NSWA+
ລະຫັດຜູ້ນຳໃຊ້ (E)		ແມ່ນລະຫັດຜູ້ນຳໃຊ້ລະບົບຂອງຜູ້ປະກອບການ, ຕົວແທນຂອງຜູ້ປະກອບການ, ຜູ້ຂົນສົ່ງສິນຄ້າ
ໜ້າຫຼັກ		ໃຊ້ເພື່ອເຂົ້າສູ່ໜ້າໂມດູລ໌"ໜ້າຫຼັກ" ຂອງລະບົບ
ອອກຈາກລະບົບ		ໃຊ້ເພື່ອ"ອອກຈາກລະບົບ"
SD		ກົດໃສ່ເພື່ອສະແດງຝັງຊັນອື່ນໆທີ່ບັນຈຸຢູ່ໃນປຸ່ມດັ່ງກ່າວ.
ຄົ້ນຫາ SD		ກົດໃສ່ເພື່ອ "ຄົ້ນຫາ SD" ເພື່ອສະແດງໜ້າຈໍທີ່ຈະສ້າງຂໍ້ມູນຂອງ SD ໃສ່
ເອກະສານຂົນສົ່ງ ສິນຄ້າ (TD)		ກົດໃສ່ເພື່ອສະແດງຝັງຊັນອື່ນໆທີ່ບັນຈຸຢູ່ໃນປຸ່ມດັ່ງກ່າວ (TD).
ຄົ້ນຫາ TD		ກົດໃສ່ເພື່ອ "ຄົ້ນຫາເອກະສານຂົນສົ່ງສິນຄ້າ (TD)"
ເຊື່ອມໂຍງເອກະສານຂົນສົ່ງ ສິນຄ້າ (TD) ກັບໃບ ອະນຸຍາດ		ໃຊ້ເພື່ອ "ເຊື່ອມໂຍງເອກະສານຂົນສົ່ງສິນຄ້າ (TD) ກັບໃບ ອະນຸຍາດ"
ຄົ້ນຫາ		ໃຊ້ເພື່ອ "ຄົ້ນຫາ" ຫຼືກວດເບິ່ງສະຖານະຂອງ SD ແລະ TD
ສະແດງຜົນ		ໃຊ້ເພື່ອ "ສະແດງຜົນ" ລາຍລະອຽດຂອງ SD ແລະ TD
ຂັ້ນຕອນການດຳເນີນງານ		ໃຊ້ເພື່ອດຳເນີນການສ້າງ, ປ້ອນຂໍ້ມູນຂອງເອກະສານຂົນສົ່ງສິນຄ້າ, ດຳເນີນການລົງທະບຽນ ເອກະສານຂົນສົ່ງສິນຄ້າ TD ທີ່ຖືກສ້າງແລ້ວ
ການດາວໂຫຼດເພື່ອເບິ່ງ ຫຼື ປິ່ນອອກ		ກົດໃສ່ເພື່ອເບິ່ງ ຫຼື ປິ່ນອອກປະກອບມີ **2** ຝັງຊັນ: • ເພື່ອເບິ່ງລາຍການ SD ໃນໜ້າຈໍເປັນຮູບແບບໄຟລ໌ PDF • ເພື່ອເບິ່ງປິ່ນລາຍການ TD ໃນໜ້າຈໍເປັນຮູບແບບໄຟລ໌ PDF
ປຽບທຽບ		ໃຊ້ເພື່ອປຽບທຽບເປີດໜ້າຈໍ
ກອັບປີ້ SD ແລະ ກອັບປີ້ TD		ໃຊ້ປຸ່ມນີ້ຢູ່ໜ້າຂອງ SD ແມ່ນການກອັບປີ້ຂໍ້ມູນຂອງ SD ໃຊ້ປຸ່ມນີ້ຢູ່ໜ້າຂອງ TD ແມ່ນການກອັບປີ້ຂໍ້ມູນຂອງ TD
ສ້າງໃໝ່ / ລົງທະບຽນໃໝ່		1) ຕ້ອງການສ້າງ SD ໃໝ່ 2) ຕ້ອງການລົງທະບຽນໃໝ່ ຫຼັງຈາກ SD ຖືກສ້າງຂຶ້ນແລ້ວ ຫຼັງຈາກນັ້ນ

Drop down		ໃຊ້ເພື່ອຊອກຫາລາຍການທີ່ກ່ຽວຂ້ອງໃນປຸ່ມດັ່ງກ່າວ
ຫ້ອງພາກບັງຄັບ	*	ຫ້ອງພາກບັງຄັບທີ່ຈຳເປັນຕ້ອງໄດ້ຕື່ມຂໍ້ມູນໃສ່ໃຫ້ຄົບຈຶ່ງສາມາດຜ່ານໄດ້
ບັນທຶກ		ສຳລັບບັນທຶກຂໍ້ມູນ
ອອກ / ກັບ		ສັນຍາລັກນີ້ມີ **2** ຟັງຊັນ: 1) "ອອກ" ໝາຍເຖິງອອກຈາກໜ້າຈໍທີ່ກຳລັງດຳເນີນການຢູ່ 2) "ກັບ" ໝາຍເຖິງກັບສູ່ໜ້າຈໍເກົ່າທີ່ຜ່ານມາ
ຕິກເອົາເຄື່ອງໝາຍຖືກ		ຕິກໃສ່ "ເຄື່ອງໝາຍຖືກ" ເມື່ອຕ້ອງການເຊື່ອມໂຍງໃບອະນຸຍາດ
ເພີ່ມ TD ເພີ່ມລາຍການເອກະສານຄັດຕິດ		ສັນຍາລັກນີ້ມີ **2** ຟັງຊັນ: 1) ເພີ່ມເອກະສານການຂົນສົ່ງສິນຄ້າ TD ໃໝ່ 2) ເພີ່ມລາຍການເອກະສານຄັດຕິດໃໝ່
ລຶບ TD		ໃຊ້ເພື່ອລຶບເອກະສານຂົນສົ່ງສິນຄ້າ TD
ເພີ່ມໄຟລ້	ເພີ່ມໄຟລ້	ໃຊ້ເພື່ອ "ເພີ່ມໄຟລ້" ຄັດຕິດ (ອັບໂຫຼດ) ເອກະສານ
ເບິ່ງໄຟລ້	ຄົ້ນຫາໄຟລ້	ໃຊ້ເພື່ອ "ເບິ່ງໄຟລ້" ເພື່ອເປີດ ຫຼື ເບິ່ງເອກະສານທີ່ໄດ້ຄັດຕິດໄປ
ຄົ້ນຫາ	ຄົ້ນຫາ	ໃຊ້ເພື່ອ "ຄົ້ນຫາ" ເພື່ອສະແດງລາຍລະອຽດຂອງຂໍ້ມູນ
ອັບໂຫຼດ		ໃຊ້ເພື່ອ "ອັບໂຫຼດ" ເອກະສານສຳລັບຄັດຕິດ
ສົ່ງ		ໃຊ້ເພື່ອກົດ "ສົ່ງ" ໄຟລ້ເອກະສານທີ່ຄັດຕິດ
ການແຈ້ງເຕືອນ		ໝາຍເຖິງຂໍ້ຄວາມແຈ້ງເຕືອນການດຳເນີນການຂອງທ່ານໄດ້ສຳເລັດແລ້ວ (ຈະສະແດງຂຶ້ນໜ້າຈໍເມື່ອການດຳເນີນງານສຳເລັດ).
ລຶບ / ການແຈ້ງເຕືອນເມື່ອດຳເນີນການຜິດເງື່ອນໄຂ		ສັນຍາລັກນີ້ມີ **2** ຟັງຊັນ: 1) "ລຶບ" ເພື່ອລຶບລາຍການເອກະສານຄັດຕິດທີ່ຍັງບໍ່ທັນໄດ້ສົ່ງ 2) ການດຳເນີນງານບໍ່ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດ
ລາຍລະອຽດຂອງ TD / ປະຫວັດຂອງ SD / ປະຫວັດຄວາມເປັນມາຂອງ TD		ສັນຍາລັກນີ້ມີ **3** ຟັງຊັນ: 1) ສະແດງລາຍລະອຽດເອກະສານຂົນສົ່ງສິນຄ້າ TD 2) ສະແດງປະຫວັດຄວາມເປັນມາຂອງ SD 3) ສະແດງປະຫວັດຄວາມເປັນມາຂອງ TD
ຂໍ້ມູນລະບົບທີ່ກ່ຽວຂ້ອງກັບ SD		ໃຊ້ເພື່ອສະແດງຂໍ້ມູນຂອງ SD
ລາຍການຫີບຫໍ່ສິນຄ້າໃໝ່ LP	LP ໃຫມ່	ໃຊ້ເພື່ອເພີ່ມລາຍການຫີບຫໍ່ສິນຄ້າໃໝ່.
ຍົກເລີກ SD		ໃຊ້ເພື່ອ "ຍົກເລີກ" ການສ້າງ SD
ໜ້າປັດສະແດງລາຍການ TD		ໃຊ້ເພື່ອສະແດງຂໍ້ມູນຂອງເອກະສານຂົນສົ່ງສິນຄ້າ TD ເປັນໄຟລ້ PDF.

ພັບໜ້າຈໍເມນູ		ໃຊ້ເພື່ອພັບໜ້າຈໍເມນູເຂົ້າໄປເບື້ອງຊ້າຍມື ແລະ ເຮັດໃຫ້ໜ້າຈໍກ້ວາງຂຶ້ນ
ພັບເຂົ້າ / ຂະຫຍາຍໜ້າຈໍອອກ (ໃນ ToDo List)		ໃຊ້ເພື່ອຈະພັບ ຫຼື ຂະຫຍາຍໜ້າຈໍ ຕາມທາງລູກສອນຂອງສັນຍາລັກ
ຂະຫຍາຍໜ້າຈໍເມນູ		ໃຊ້ເພື່ອສະແດງໜ້າຈໍເມນູອອກມາເບື້ອງຂາວມື
ຣີເຟລຊ Refresh		ໃຊ້ເພື່ອຣີເຟຣັສ ຂໍ້ມູນໃໝ່ ແລະ ສະແດງລາຍການໃໝ່
ເຊື່ອງຂໍ້ມູນ		ໃຊ້ເພື່ອສະແດງຜົນໃນລາຍການທີ່ຕ້ອງເຮັດ
ຍົກເລີກການເຊື່ອງຂໍ້ມູນ		ໃຊ້ເພື່ອຍົກເລີກການເຊື່ອງຂໍ້ມູນ
ການແຈ້ງເຕືອນ		ເມື່ອປະກົດຂຶ້ນໜ້າຈໍ ໝາຍເຖິງການແຈ້ງເຕືອນໜ້າບໍ່ມີພື້ນທີ່ວ່າງ
ອອກ		ໃຊ້ເພື່ອອອກຈາກໜ້າຫຼັກທີ່ດຳເນີນການຢູ່
ດັດແກ້ຂໍ້ມູນ TD		ໃຊ້ປຸ່ມນີ້ຢູ່ໜ້າຂອງ TD ແມ່ນການດັດແກ້ຂໍ້ມູນຂອງ TD
ດຶງຂໍ້ມູນອອກເປັນຟາຍ XML ຂອງລະບົບອາຊີກູດ້າ		ໝາຍເຖິງການດຶງຂໍ້ມູນຢູ່ NSWA+ ໄປໃສ່ ASYCUDA ຊຶ່ງປຸ່ມນີ້ຈະມີຢູ່ທັງໜ້າຂອງ SD ແລະ TD
Capture ACDD		ແມ່ນປຸ່ມທີ່ຈະເປີດໜ້າການແຈ້ງພາສີເປັນລາຍລະອຽດ (ຕີບໍ)
Verify the document		ແມ່ນປຸ່ມກວດກາເອກະສານ ແລ້ວລະບົບຈະຄິດໄລ່ອາກອນຂຶ້ນມາ
Submit ACDD		ປຸ່ມສົ່ງຂໍ້ມູນການແຈ້ງພາສີເປັນລາຍລະອຽດ (ເອົາເລກບໍ)

A. ການເຂົ້າສູ່ລະບົບ Log-in to NSWA+ Platform

1. ເຂົ້າເວັບໄຊທ์ຂອງ NSWA+ ຕາມທີ່ຢູ່ https://www.laonsw.net
2. ກົດໃສ່ປຸ່ມ "Log-in"



3. ປ້ອນ ໄອດີ ຜູ້ນຳໃຊ້ໃສ່
4. ປ້ອນລະຫັດຜ່ານໃສ່
5. ກົດໃສ່ເຄື່ອງໝາຍ OK ເພື່ອເຂົ້າສູ່ລະບົບ



6. ໜ້າຕ່າງຫຼັກຂອງລະບົບ → ກົດໃສ່ ການແຈ້ງພາສີ



ລາຍລະອຽດໂດຍຫຍໍ້

(1) ຂໍ້ມູນຂອງ SD



ຊື່ຂໍ້ມູນ / ຂໍ້ມູນທີ່ຈຳເປັນຕ້ອງມີ	ຄຳອະທິບາຍ (ແລະ ລາຍລະອຽດຂອງຂໍ້ມູນທີ່ຈຳເປັນຕ້ອງປ້ອນ ຫຼື ຕ້ອງເລືອກ)
ຮູບແບບການດຳເນີນການຄ້າ	ເລືອກ _> ນຳເຂົ້າ, ສົ່ງອອກ ຫຼື ສົ່ງຜ່ານ
ດ່ານພາສີບ່ອນຍື່ນໃບແຈ້ງພາສີ	ເລືອກ _> ລະຫັດດ່ານພາສີບ່ອນທີ່ຈະແຈ້ງພາສີ
ດ່ານພາສີບ່ອນສິນຄ້າເຂົ້າ / ອອກ	ເລືອກ _> ລະຫັດດ່ານພາສີບ່ອນສິນຄ້າເຂົ້າ/ອອກ
ວິທີການຂົນສົ່ງ	ເລືອກ _> ສິນຄ້າຂົນສົ່ງມາດ້ວຍຍົນຫຼືລົດ (ຫຼືມາແບບລວບລວມສິນຄ້າ)
ເລກທີ່ຜູ້ຂົນສົ່ງສິນຄ້າ	ປ້ອນ_> ເລກ TIN ຫຼືຊື່ຂອງບໍລິສັດຜູ້ຂົນສົ່ງສິນຄ້າ (ຖ້າບໍ່ຮູ້ໃສ່ N/A ກໍ່ໄດ້)
ເລກທະບຽນລົດ/ໄຟລ້ຽວບິນ	ປ້ອນ_> ເລກທະບຽນລົດ/ຖ້ຽວບິນທີ່ຂົນສົ່ງສິນຄ້າມາ
ເວລາທີ່ຄາດຄະເນວ່າສິນຄ້າຈະມາ ຮອດດ່ານ	ເລືອກ _> ເວລາ, ວັນທີທີ່ຄາດຄະເນວ່າສິນຄ້າຈະມາຮອດໜ້າດ່ານ
ຈຳນວນລົດບັນທຸກ	ປ້ອນຈຳນວນໃສ່ ຖ້າໃບຂົນໃບໜຶ່ງມາຫຼາຍຄັນ (ກໍ່ປ້ອນນຳນວນຕົວຈິງໃສ່)
ບ່ອນຂົນສົນຄ້າລົງ	ປ້ອນ_> ສະຖານທີ່ບ່ອນຈະເອົາສິນຄ້າລົງ
CFS ທີ່ກຳນົດໃຫ້ເອົາສິນຄ້າໄປລົງ	ເລືອກ _> ຊື່ຂອງອານາເຂດພາສີທີ່ສິນຄ້າຈະມາຫຼືໄປລົງ (ຖ້າບໍ່ມີໃຫ້ເລືອກໃສ່ເປັນ OTHS ກໍ່ໄດ້)
ປະເພດສິນຄ້າທີ່ນຳເຂົ້າ	ເລືອກ _> ປະເພດສິນຄ້າທີ່ນຳເຂົ້າ(ສິນຄ້າອື່ນໆ,ສິນຄ້າທົ່ວໄປ,ສິນຄ້ານ້ຳມັນແລະກາສ໌,ສິນຄ້າປະເພດລົດ)
ສົ່ງ / ປະເທດປາຍທາງ.	ປະເທດປາຍທາງ (ສຳລັບການນຳເຂົ້າປະເທດປາຍທາງເປັນປະເທດລາວແຕ່ສຳລັບການສົ່ງອອກມັນຈະ ເປັນປະເທດອື່ນ)
ບ່ອນສົ່ງສິນຄ້າອອກ	ປ້ອນ_> ປະເທດສົ່ງອອກ (ລະຫັດ)
ເລກທະບຽນລົດ	ປ້ອນ_> ເລກທະບຽນລົດຫຼືທ່ຽນບິນ (ເລກທະບຽນລົດ/ໄຟລ້ຽວບິນ = ເລກທະບຽນລົດ)
ຊື່ຄົນຂັບລົດ	ປ້ອນ_> ຊື່ຜູ້ຂັບລົດຫຼືເລກທີ່ Passport ຂອງຜູ້ຂັບລົດ(ຖ້າບໍ່ຮູ້ໃສ່ N/A ກໍ່ໄດ້)
ປະເທດປາຍທາງ	ປ້ອນ_> ປະເທດປາຍທາງ (ລະຫັດ)
ໝາຍເຫດ	ຖ້າລົດທີ່ຂົນສິນຄ້າ 1 ໃບຂົນມີຫຼາຍຄັນ ໃຫ້ປ້ອນເລກທະບຽນລົດຂອງ 1 ຄັນໃສ່ຫ້ອງ "ເລກທະບຽນ ລົດ/ໄຟລ້ຽວບິນ" ສ່ວນເລກທະບຽນຂອງຄັນທີ່ເຫຼືອແມ່ນໃຫ້ປ້ອນໃສ່ຫ້ອງ ໝາຍເຫດ ນີ້ທັງໝົດ.
ບໍ່ມີສິນຄ້າ	ຕ້ອງໄດ້ກົດເລືອກປຸ່ມນີ້ **ຖ້າລົດບັນທຸກຜ່ານແດນໂດຍບໍ່ມີສິນຄ້າ**

(2) ຂໍ້ມູນຂອງ TD



ຊື່ຂໍ້ມູນ / ຂໍ້ມູນທີ່ຈຳເປັນຕ້ອງມີ	ຄຳອະທິບາຍ (ແລະ ລາຍລະອຽດຂອງຂໍ້ມູນທີ່ຈຳເປັນຕ້ອງປ້ອນ ຫຼື ຕ້ອງເລືອກ)
ລະຫັດປະເທດຕົ້ນທາງ	ເລືອກ _> ລະຫັດປະເທດຕົ້ນທາງທີ່ຂົນສົ່ງສິນຄ້າມາ
ເລກທີເອກະສານຂົນສົ່ງ	ສຳລັບການຂົນສົ່ງທາງຍົນໃຫ້ປ້ອນເລກທີ່ຂົນສົ່ງສິນຄ້າຂອງທ່ຽວບິນແຕ່ການຂົນສົ່ງທາງລົດແມ່ນໃຫ້ປ້ອນເລກທີ່ເອກະສານຂົນສົ່ງຫຼືເລກທີໃບອິນວອຍ
ເລກທີ່ຜູ້ນຳເຂົ້າ	ປ້ອນ_> ເລກ TIN ຂອງຜູ້ນຳເຂົ້າ
ລະບອບໃບແຈ້ງ	ເປັນລະຫັດຂອງລະບອບໃຈແຈ້ງ (IM- 4,IM 5, EX 1 or EX 2, …)
ຈຳນວນສິນຄ້າ (ເລກໝາຍສິນຄ້າ)	ສຳລັບການຂົນສົ່ງທາງຍົນນີ້ແມ່ນລະຫັດພິເສດທີ່ບົ່ງບອກເຖິງສິນຄ້າຂອງແຖວບິນນັ້ນແຕ່ສຳລັບການຂົນສົ່ງທາງລົດລະບົບຈະປ້ອນເປັນເລກ 1 ໂອໂຕໃຫ້ເລີຍ.
ຊື່ຜູ້ສົ່ງອອກ	ປ້ອນ_> ຊື່ຂອງບໍລິສັດສົ່ງອອກ (ບໍລິສັດຕົ້ນທາງ).
ເງື່ອນໄຂສົ່ງມອບສິນຄ້າ	ປ້ອນ_> ລະຫັດຂອງເງື່ອນໄຂທາງດ່ານການຄ້າ ເຊັ່ນ: CIF, FOB, ….
ປະເທດທາງຜ່ານ	ປ້ອນ_> ລະຫັດປະເທດທາງຜ່ານ (ປະເທດທີ່ຂົນສົ່ງສິນຄ້າຜ່ານ) (ປ້ອນເປັນຕົວພິມໃຫຍ່)
ໄປຫາ	ເລືອກ _> ສະຖານທີ່ຈະລົງສິນຄ້າ ຂອງປະເທດປາຍທາງ
CFS ທີ່ກຳນົດໃຫ້ເອົາສິນຄ້າໄປລົງ	ເລືອກ _> ຊື່ຂອງອານາເຂດພາສີທີ່ສິນຄ້າຈະມາຫຼືໄປລົງ
ວັນທີການຂົນສົນຄ້າຂຶ້ນ	ເລືອກ _> ວັນທີເອົາສິນຄ້າຂຶ້ນລົດ
ສະຖານທີ່ຂົນສົນຄ້າຂຶ້ນ	ເລືອກ _> ສະຖານທີ່ເອົາສິນຄ້າຂຶ້ນ
ວິທີການຄິດຄ່າຂົນສົ່ງສິນຄ້າ	ປ້ອນ_> ລະຫັດສັນຍາການສົ່ງມອບສິນຄ້າ (Incoterm) ຕົວຢ່າງ: CIF ຫຼື FOB … (ໃຊ້ສະເພາະ SD ທີ່ແຍກແຈ້ງເທົ່ານັ້ນ)
ສະກຸນເງິນ	ເລືອກ _> ສະກຸນເງິນຊື້ຂາຍຂອງໃບອິນວອຍ (ໃຊ້ສະເພາະ SD ທີ່ແຍກແຈ້ງເທົ່ານັ້ນ)
ລວມຍອດມູນຄ່າໃນໃບອິນວອຍ	ປ້ອນ_> ລວມຍອດມູນຄ່າຂອງໃບອິນວອຍ (ໃຊ້ສະເພາະ SD ທີ່ແຍກແຈ້ງເທົ່ານັ້ນ)
ລະບອບສະສາງ	ປ້ອນເລກລະບອບໃສ່ ເຊັ່ນ: 4700:500 / 4700:550 / …..
ການໃຫ້ສິດທິພິເສດ	ເລືອກ _> FORMD …..
ລວບລວມສິນຄ້າ	ກໍລະນີ SD ມີການລວບລວມສິນຄ້າ, ຕ້ອງກົດໝາຍຕົກປຸ່ມນີ້ເພື່ອໃຫ້ຮູ້ວ່າ SD ມີການລວບລວມສິນຄ້າ. (**ໃຊ້ສະເພາະ ການນຳເຂົ້າທາງອາກາດ ແລະ ກໍລະນີແຈ້ງລວມເທົ່ານັ້ນເທົ່ານັ້ນ). ຖ້າເປັນ SD ທົ່ວໄປບໍ່ເລືອກ ຫຼື ບໍ່ໄດ້ໃຊ້**

(3) ຂໍ້ມູນຂອງ LP



ຊື່ຂໍ້ມູນ / ຂໍ້ມູນທີ່ຈຳເປັນຕ້ອງມີ	ຄຳອະທິບາຍ (ແລະ ລາຍລະອຽດຂອງຂໍ້ມູນທີ່ຈຳເປັນຕ້ອງປ້ອນ ຫຼື ຕ້ອງເລືອກ)
ລຳດັບສິນຄ້າຕາມເບີ	ປ້ອນ_> ເລກທີ່ລາຍການສິນຄ້າໃບຫຸ້ມຫໍ່ສິນຄ້າ (ເລີ້ມຕົ້ນຈາກ1)
ຈຳນວນຫີບຫໍ່ສິນຄ້າ	ປ້ອນ_> ຈຳນວນສິນຄ້າຂອງສິນຄ້າລາຍການນີ້
ນ້ຳຫນັກລວມ	ປ້ອນ_> ນ້ຳຫນັກລວມຂອງສິນຄ້າລາຍການນີ້
ນ້ຳຫນັກຕົວຈິງ	ປ້ອນ_> ນ້ຳຫນັກຕົວຈິງຂອງສິນຄ້າລາຍການນີ້
ຫົວໜ່ວຍ ສິນຄ້າ	ເລືອກ_> ປະເພດຫົວໜ່ວຍ ເຊັ່ນ:ຈຳນວນ, ຄູ່, ລິດ ແລະ ອື່ນໆ
ເຄື່ອງໝາຍຫຸ້ມຫໍ່ສິນຄ້າ	ເລືອກ_> ປະເພດຫຸ້ມຫໍ່ສິນຄ້າ (ເຊັ່ນກັບ, ຖົງ, ແກັດແລະອື່ນໆ …)
ເລກລະຫັດສິນຄ້າ	ປ້ອນ_> ລະຫັດ HS code / ເລກລະຫັດສິນຄ້າ (ອີງຕາມສາລະບານພາສີ)
ປະເທດຕົ້ນກຳເນີດ	ເລືອກລະຫັດປະເທດຕົ້ນກຳເນີດໃສ່
ລາຍລະອຽດສິນຄ້າ	ປ້ອນ_> ລາຍລະອຽດຂອງສິນຄ້າ
ປະລິມານຕໍ່ຫົວໜ່ວຍ	ປ້ອນ_> ຈຳນວນປະລິມານຂອງສິນຄ້າຕໍ່ຫົວໜ່ວຍ
ເລກຖັງ	ປ້ອນ_> ເລກຖັງ (ກໍລະນີສິນຄ້າແມ່ນລົດ)
ເລກຈັກ	ປ້ອນ_> ເລກຈັກ (ກໍລະນີສິນຄ້າແມ່ນລົດ)
ລາຄາສິນຄ້າ	ປ້ອນ_> ລາຄາຂອງສິນຄ້າຂອງລາຍການນີ້
ສະກຸນເງິນ	ປ້ອນ_> ປ້ອນສະກຸນເງິນ(ຕ້ອງເປັນUSDເທົ່ານັ້ນ,ຍົກເວັ້ນນ້ຳມັນUSPແລະກາສ໌USG)
ໝາຍເຫດ	ຫ້ອງນີ້ໄວ້ເພື່ອຈະໄດ້ບັນທຶກລາຍລະອຽດອື່ນໆ ຕາມຄວາມຕ້ອງການ (ຖ້າຈຳເປັນ)
ຊື່ຂໍ້ມູນ / ຂໍ້ມູນທີ່ເປັນທາງເລືອກ	**ຄຳອະທິບາຍ (ແລະ ລາຍລະອຽດຂອງຂໍ້ມູນທີ່ຈຳເປັນຕ້ອງປ້ອນ ຫຼື ຕ້ອງເລືອກ)**
ສິນຄ້າອັນຕະລາຍທີ່ກຳນົດໂດຍອົງການUN	ເລືອກ_> ລະຫັດສະເພາະສິນຄ້າອັນຕະລາຍທີ່ກຳນົດໂດຍ UN (ສິນຄ້າທົ່ວໄປບໍ່ໃຊ້)
ຕູ້ຄອນເທນເນີເລກທີ	ປ້ອນ_> ເລກທີ່ຕູ້ຄອນເທນເນີ (ຖ້າມີ)
ເຄື່ອງໝາຍແລະເລກໝາຍຫີບຫໍ່ສິນຄ້າ	ປ້ອນ_> ເຄື່ອງໝາຍສະເພາະຂອງລາຍການສິນຄ້າ (ຖ້າມີ)
Other information covering the liability of goods to specific requirements	ປ້ອນຂໍ້ມູນ **ເອກະສານປະກອບ** ເຊັ່ນ: **CKD, SP, ….** ແລະ ອື່ນໆ

ສິ່ງທີ່ຄວນຮູ້:

- SD ໝາຍເຖິງ ໃບກຳກັບການຂົນສົ່ງ ເມື່ອກ່ອນ ແຕ່ປັດຈຸບັນເອີ້ນເປັນ SD, SD ໝາຍເຖິງລົດທີ່ຂົນສົ່ງສິນຄ້າມາ ຊຶ່ງ 1SD ສາມາດຂົນມາ ຫຼາຍຄັນກໍ່ໄດ້ (ເປັນລັກສະນະວ່າ 1ໃບຂົນ ໃຊ້ລົດຂົນມາຫຼາຍຄັນ)
- TD ໝາຍເຖິງເອກະສານຂົນສົ່ງສິນຄ້າ ຫຼື ປະເພດສິນຄ້າ ຫຼື ຊຸດ ໃບ ບ ທີ່ຈະແຈ້ງເສຍພາສີ 1 ຊຸດ (1SD ສາມາດມີຫຼາຍ TD)
- LP ໝາຍເຖິງລາຍການສິນຄ້າ (1TD ສາມາດມີ 1 ຫຼື 99 LP ອີງໃສ່ປະເພດສິນຄ້າ)

1. ສຳລັບສິນຄ້າລົດໃຫຍ່: 1SD ສາມາດມີຫຼາຍ TD; ແຕ່ 1TD ມີ 1LP ເທົ່ານັ້ນ

- 1SD ເທົ່າກັບ ລົດຂົນມາ 1 ຄັນ
- 1SD ມີຫຼາຍ TD ເທົ່າກັບ ລົດຂົນໜຶ່ງຄັນ ຂົນລົດນ້ອຍມາຫຼາຍຄັນ (ຖ້າຂົນມາ 5 ຄັນ ກໍ່ມີ 5 TD)
- 1TD ມີ 1LP ເນື່ອງຈາກກົດໝາຍພາສີກຳນົດໃຫ້ແຈ້ງໃບ ບ 1 ຊຸດ ຕໍ່ 1 ຄັນ. ສະນັ້ນກໍລະນີລົດ 1TD ຈຶ່ງມີ 1LP ເທົ່ານັ້ນ
- ຫຼັງຈາກສ້າງ SD ສຳເລັດຕ້ອງໄດ້ລົງທະບຽນ ແລ້ວຕ້ອງເຊື່ອມໂຍງ TD ກັບໃນເຕັກນິກກ່ອນ ຈຶ່ງສາມາດແຈ້ງໄດ້ (ຖ້າຍັງບໍ່ໄດ້ເຊື່ອມໂຍງກໍ່ສາມາດຕີ ໃບ ບ ໄດ້ ແຕ່ບໍ່ສາມາດແຈ້ງໄດ້ຈົນກວ່າຈະເຊື່ອມໂຍງໃບອະນຸຍາດກ່ອນ)
- ຫຼັງຈາກຕີໃບ ACDD ແລ້ວ ຕ້ອງກວດຄວາມຄາດເຄື່ອນຂອງຂໍ້ມູນກ່ອນຈະຍື່ນໃບ ບ (ACDD)

2. ສຳລັບສິນຄ້າລົດຈັກ: 1SD ສາມາດມີຫຼາຍ TD; ແຕ່ 1TD ມີໄດ້ 1-10LP ເທົ່ານັ້ນ

- 1SD ເທົ່າກັບ ລົດຂົນມາ 1 ຄັນ
- 1SD ມີຫຼາຍ TD ເທົ່າກັບ ລົດຂົນໜຶ່ງຄັນ ຂົນລົດຈັກມາຫຼາຍຄັນ
- 1TD ມີໄດ້ 1-10LP ເນື່ອງຈາກກົດໝາຍພາສີກຳນົດໃຫ້ແຈ້ງໃບ ບ 1 ຊຸດ ຕໍ່ 1 ຫຼື 10 ຄັນ. ກໍລະນີນີ້ ຖ້າມີລົດຈັກ 11 ຄັນ ຈຳເປັນຕ້ອງສ້າງເປັນ 2TD (TD1=10 ຄັນ ແລະ TD2 =1 ຄັນ)
- ຫຼັງຈາກສ້າງ SD ສຳເລັດ ແລະ ໄດ້ລົງທະບຽນແລ້ວ ຕ້ອງເຊື່ອມໂຍງ TD ກັບໃບເຕັກນິກກ່ອນ ຈຶ່ງສາມາດແຈ້ງໄດ້ (ຖ້າຍັງບໍ່ໄດ້ເຊື່ອມໂຍງກໍ່ສາມາດຕີ ໃບ ບ ໄດ້ ແຕ່ບໍ່ສາມາດແຈ້ງໄດ້ຈົນກວ່າຈະເຊື່ອມໂຍງໃບອະນຸຍາດກ່ອນ)
- ຫຼັງຈາກຕີໃບ ບ (ACDD) ແລ້ວ ຕ້ອງກວດຄວາມຄາດເຄື່ອນຂອງຂໍ້ມູນກ່ອນຈະຍື່ນໃບ ບ (ACDD)

3. ສຳລັບສິນຄ້ານ້ຳມັນເຊື້ອໄຟ ແລະ ສິນຄ້າທົ່ວໄປ: 1SD ສາມາດມີຫຼາຍ TD; ແຕ່ 1TD ມີໄດ້ 1-99LP.

- 1SD ເທົ່າກັບ ລົດຂົນມາ 1 ຄັນ (ຫຼື ສາມາດຂົນມາຫຼາຍຄັນກໍ່ໄດ້)
- 1SD ສາມາດຂົນມາຫຼາຍຄັນ ເທົ່າກັບ 1 ໃບຂົນ ລົດຂົນມາຫຼາຍຄັນ (ກໍລະນີນີ້ ທ່ານສາມາດເລືອກຕີຂໍ້ມູນ 1SD ຕໍ່ 1ຄັນກໍ່ໄດ້ ຫຼື 1SD ຕໍ່ ຫຼາຍຄັນກໍ່ໄດ້)
- 1SD ມີຫຼາຍ TD ເທົ່າກັບ ລົດຂົນສິນຄ້າມາຫຼາຍລາຍການ
- 1TD ມີໄດ້ 1-99LP ເທົ່ານັ້ນ ເນື່ອງຈາກກົດໝາຍພາສີກຳນົດໃຫ້ແຈ້ງໃບ ບ 1 ຊຸດ ຕໍ່ 1 ຫຼື 99 ລາຍການສິນຄ້າເທົ່ານັ້ນ. ກໍລະນີນີ້ ຖ້າມີສິນຄ້າ 100 ລາຍການ ຈຳເປັນຕ້ອງສ້າງເປັນ 2TD (TD1=99 ລາຍການ ແລະ TD2 =1 ລາຍການ)
- ຫຼັງຈາກສ້າງ SD ສຳເລັດຕ້ອງໄດ້ລົງທະບຽນ (ສຳລັບນ້ຳມັນເຊື້ອໄຟຕ້ອງເຊື່ອມໂຍງໃບອະນຸຍາດກ່ອນ, ຖ້າເປັນສິນຄ້າທົ່ວໄປແມ່ນບໍ່ເຊື່ອມໂຍງ ເອກະສານ ແຕ່ຕ້ອງຄັດຕິດເອກະສານທີ່ຈຳເປັນເບິ່ງຂໍ້ 3.3) ຈຶ່ງສາມາດຕີໃບແຈ້ງໄດ້.
- ຫຼັງຈາກຕີໃບ ບ (ACDD) ແລ້ວ ຕ້ອງກວດຄວາມຄາດເຄື່ອນຂອງຂໍ້ມູນກ່ອນຈະຍື່ນໃບ ບ (ACDD)

ກໍລະນີ 1SD ຕໍ່ 1 ຄັນ: ຖ້າສິນຄ້າເປັນປະເພດດຽວກັນ ກໍລະນີນີ້ຈຸດດີຂອງມັນຄື ເມື່ອລົດທີ່ຂົນສິນຄ້າມາມີຫຼາຍຄັນ ແລະ ຄັນໃດຄັນ 1 ມີບັນຫາກໍ່ສາມາດແຈ້ງຄັນອື່ນໄດ້ (ເພາະ 1SD ຕໍ່ 1ຄັນ ແລະ ການແຈ້ງສິນຄ້າທີ່ມາແລ້ວນັ້ນຈະບໍ່ມີບັນຫາ). ແຕ່ຈຸດເສຍຂອງກໍລະນີນີ້ຄື ການແຈ້ງ ຫຼາຍຊຸດແມ່ນຕ້ອງໄດ້ເສຍຄ່າລະລຶບ NSWA+ ແລະ ຄ່າ ASYCUDA ຫຼາຍຄັ້ງ.

ກໍລະນີ 1SD ຂົນມາຫຼາຍຄັນ: ຖ້າສິນຄ້າເປັນປະເພດດຽວກັນ ກໍລະນີນີ້ຈຸດດີຂອງມັນຄື ເມື່ອຈະແຈ້ງເປັນຊຸດດຽວ ກໍ່ໄດ້ເສຍຄ່າລະລຶບ NSWA+ ແລະ ຄ່າ ASYCUDA ເທື່ອດຽວ. ແຕ່ຈຸດເສຍຂອງກໍລະນີນີ້ຄື ຖ້າລົດທີ່ຂົນສິນຄ້າມາມີຄັນໃດຄັນໜຶ່ງມີບັນຫາກໍ່ບໍ່ສາມາດແຈ້ງເສຍ ພາສີໄດ້ຈົນກວ່າລົດຈະມາຄົບ (ຫຼື ຈົນກວ່າສິນຄ້າຈະຄົບ) .

I. ການສ້າງ SD, TD ແລະ LP

1.1 ການສ້າງ SD, TD ແລະ LP

1. ກົດໃສ່ ການແຈ້ງພາສີໂດຍສັງເຂບ SD → "ສ້າງ ຫຼື ຄົ້ນຫາ SD"
2. ກົດໃສ່ປຸ່ມ (ໃໝ່)



3. ປ້ອນຂໍ້ມູນໃສ່ຫ້ອງທີ່ຈຳເປັນເພື່ອສ້າງ SD (ຂໍ້ມູນທີ່ຈຳເປັນທີ່ຕ້ອງປ້ອນເປັນຫ້ອງສີແດງ) ເຊັ່ນ:ລາຍລະອຽດໃຫ້ເບິ່ງຕາມ "**(1) ຂໍ້ມູນຂອງ SD**"



4. ກົດໃສ່ປຸ່ມ (ບັນທຶກ) ຫຼັງຈາກບັນທຶກຂໍ້ມູນສຳເລັດ ຈະໄດ້ເລກທີ່ SD
5. ກົດໃສ່ປຸ່ມ (ເພີ່ມ TD) ເພື່ອປ້ອນຂໍ້ມູນຂອງໃບຂົນສົ່ງສິນຄ້າ



6. ປ້ອນຂໍ້ມູນທີ່ຈຳເປັນເພື່ອສ້າງ TD (ຂໍ້ມູນທີ່ຈຳເປັນຕ້ອງປ້ອນເປັນຫ້ອງສີແດງ) ເຊັ່ນ: ລາຍລະອຽດໃຫ້ເບິ່ງຕາມ "**(2) ຂໍ້ມູນຂອງ TD**"
7. ກົດໃສ່ປຸ່ມ (ບັນທຶກ)



8. ຫຼັງຈາກກົດ"ບັນທຶກ" ສຳເລັດ ເລື່ອນລົງ ແລະ ກົດໃສ່ປຸ່ມ "LPໃໝ່" ເພື່ອປ້ອນຂໍ້ມູນຂອງລາຍການສິນຄ້າ



9. ປ້ອນຂໍ້ມູນທີ່ຈຳເປັນເພື່ອສ້າງ LP ເຊັ່ນ: ລາຍລະອຽດໃຫ້ເບິ່ງຕາມ "**(3) ຂໍ້ມູນຂອງ LP**"
10. ກົດໃສ່ປຸ່ມ (ບັນທຶກ) ຫຼັງຈາກໄດ້ປ້ອນຂໍ້ມູນທີ່ຈຳເປັນສຳເລັດ



- ການປ້ອນຂໍ້ມູນໃສ່ LP ຈຳເປັນຕ້ອງປ້ອນໃຫ້ຄົບຖ້ວນຕາມປະເພດສິນຄ້າ ເພື່ອຫຼີກລ້ຽງຂໍ້ມູນບໍ່ຕົງກັນລະຫວ່າງຂໍ້ມູນໃນ ລະບົບແຈ້ງພາສີປະຕູດຽວ ແລະ ຂໍ້ມູນໃນໃບ ບ.
- ຂໍ້ 11 ແລະ 12 ລຸ່ມນີ້ແມ່ນອະທິບາຍກ່ຽວກັບຂັ້ນຕອນການສ້າງ LP ໃໝ່ ດ້ວຍການກອບປີ່ ແລະ ອັບໂຫຼດເປັນຟາຍ Excel

11. ກົດເລືອກ LP1 _> ກົດໃສ່ປຸ່ມ LP ສ້າງ ໃໝ່ (ເພື່ອເປັນການກອບປີ່ LP1 ເປັນ LP ໃໝ່ ທີ່ຄ້າຍຄື ຊຶ່ງສາມາດແກ້ໄຂຂໍ້ມູນເປັນ LP2 ຫຼື ຕໍ່ໆໄປໄດ້ເລີຍ ແຕ່ຢ່າລືມແກ້ໄຂຂໍ້ມູນຢ່າງລະອຽດກ່ອນກົດບັນທຶກ)



12. ກົດໃສ່ປຸ່ມ ອັບໂຫຼດຟາຍ Excel ເຂົ້າໃນ LP ເພື່ອອັບໂຫຼດ ຖ້າບໍ່ຢາກສ້າງ LP ໃໝ່ເທື່ອລະລາຍການ (ກໍລະນີສິນຄ້າມີຫຼາຍ ລາຍການ) "ແຕ່ຕ້ອງດາວໂຫຼດແບບຟອມ LP ແລະ ຕື້ມຂໍ້ມູນໃຫ້ຖືກຕ້ອງ, ຄົບຖ້ວນກ່ອນ"





ໝາຍເຫດ:

- ຖ້າບໍ່ສາມາດດຶງຂໍ້ມູນຈາກ File Excel ໃດ້ ຕ້ອງໃດ້ເຂົ້າໄປກວດໃນ Excel file ຄືນວ່າມີການຕື່ມຂໍ້ມູນທີ່ຜິດພາດ ຫລື ບໍ່ ,ຕົວຢ່າງຂໍ້ມູນທີ່ຜິດ: 5,320.20 (ຕ້ອງພິມເປັນ 5320.20 ໃນ Excel file)

13. ກົດໃສ່ປຸ່ມ (ກັບຄືນ) ເພື່ອກັບຄືນສູ່ໜ້າຂອງ SD



14. ກົດເລືອກTD1 _>ກົດໃສ່ປຸ່ມສ້າງ TD ໃໝ່ (ເພື່ອເປັນການກວບປີ່ TD1 ເປັນ TD ໃໝ່ທີ່ຄ້າຍຄືຊຶ່ງສາມາດແກ້ໄຂຂໍ້ມູນເປັນ TD2 ຫຼືຕໍ່ໄປໄດ້ເລີຍແຕ່ຢ່າລືມແກ້ໄຂຂໍ້ມູນຢ່າງລະອຽດກ່ອນກົດບັນທຶກຖ້າເປັນກໍລະນີ 2 TD ຂໍ້ມູນຕ່າງກັນ)



ໝາຍເຫດ:

- ຖ້າຂໍ້ມູນຄືກັນຈະບໍ່ໄດ້ແກ້ໄຂ ຫຼັງຈາກກົດບັນທຶກ ຈະໄດ້ TD2 ໂອໂຕເລີຍ ພ້ອມກັບ 1LP ທີ່ຄືກັນກັບ TD1 (ຢ່າລືມແກ້ໄຂຂໍ້ມູນຂອງ LP ນີ້ ກ່ອນຈະໄປກອບປີ່ເປັນ LP ຕໍ່ໄປ)
- ການສ້າງ TD ໃໝ່ ສາມາດ ກົດໃສ່ປຸ່ມເພີ່ມ TD ປະຕິບັດຕາມຂັ້ນຕອນ 5-11 ຂ້າງເທິງນີ້ໄດ້ກໍ່ໄດ້.

15. ກົດໃສ່ປຸ່ມລົງທະບຽນ, ເພື່ອລົງທະບຽນຫຼືຍື່ນ SD ໄປຫາເຈົ້າໜ້າທີ່ພາສີ (ກ່ອນຈະລົງທະບຽນຕ້ອງໝັ້ນໃຈວ່າຂໍ້ມູນຖືກຕ້ອງ)



ໝາຍເຫດ: ກໍລະນີລົງທະບຽນໄປແລ້ວ ຈຶ່ງກວດເຫັນວ່າໄດ້ຫຼົງປ້ອນຂໍ້ມູນຜິດໄປຫຼາຍຢ່າງ ທ່ານສາມາດຍົກເລີກ SD ແລ້ວສ້າງ ໃໝ່ແທນກໍ່ໄດ້.

1.2 ການຄົ້ນຫາ SD ທີ່ເຄີຍນຳໃຊ້ແລ້ວ ເພື່ອມາສ້າງ SD ໃໝ່ (ກໍລະນີ ສິນຄ້າຄ້າຍຄືກັນ ຫຼື ມີຕົ້ນກຳເນີດສິນຄ້າບ່ອນດຽວກັນ).

1. ກົດໃສ່ ການແຈ້ງພາສີໂດຍສັງເຂບ SD → "ສ້າງ ຫຼື ຄົ້ນຫາ SD"
2. ປ້ອນເລກທີ SDໃສ່ຫ້ອງ"ເລກທະບຽນໃບSD"
3. ຄົ້ນຫາຕາມ ລະຫັດດ່ານ ຫຼື ວັນທີ (ກໍລະນີທີມີເລກ SD ຄັ້ງກ່ອນແມ່ນສາມາດຂ້າມຂັ້ນຕອນນີ້ໄດ້)
4. ກົດໃສ່ປຸ່ມ
5. ກົດເລືອກ ຜົນການຄົ້ນຫາ _>ກົດໃສ່ປຸ່ມ



6. ປ້ອນຂໍ້ມູນທະບຽນລົດ, ຈຳນວນລົດ ແລະ ເວລາທີ່ຄາດຄະເນວ່າສິນຄ້າຈະມາຮອດດ່ານ
7. ກົດໃສ່ປຸ່ມສົ່ງ

07



8. ຫຼັງຈາກບັນທຶກ ຈະໄດ້ ເລກ SD ແລະ TD (ຂໍ້ມູນ TD ແລະ LP ແມ່ນຂໍ້ມູນທີ່ຖືກມາຈາກ SD ຕົ້ນສະບັບ)
9. ກົດເລືອກ ຜົນການຄົ້ນຫາ _>ກົດໃສ່ປຸ່ມ ຫຼັງຈາກນັ້ນ ປະຕິບັດຕາມຂັ້ນຕອນ 1.5-1.11 ຂ້າງເທິງນີ້ໄດ້ກ່ຳໄດ້.



II. ການເຊື່ອມໂຍງ TD ກັບໃບອະນຸຍາດທີ່ກ່ຽວຂ້ອງ ແລະ ການຄັດຕິດເອກະສານອື່ນໆ

2.1 ການເຊື່ອມໂຍງ TD ກັບໃບອະນຸຍາດທີ່ກ່ຽວຂ້ອງ

1. ກົດໃສ່ “ເຊື່ອມໂຍງເອກະສານຂົນສົ່ງສິນຄ້າ (TD) ກັບໃບອະນຸຍາດ”
2. ປ້ອນເລກທີ່ SD ໃສ່ຫ້ອງ“ເລກທະບຽນໃບ SD”
3. ກົດເລືອກເລກ TD



4. ເລືອກປະເພດໃບອະນຸຍາດ
5. ປ້ອນເລກທີ່ໃບອະນຸຍາດໃສ່ → ແລ້ວກົດໃສ່ "ຄົ້ນຫາ" (ກໍ່ລະນີຢາກຄົ້ນຫາໃບອະນຸຍາດທັງໝົດແມ່ນສາມາດກົດ''ຄົ້ນຫາ''ໄດ້ເລີຍ, ໂດຍບໍ່ປ້ອນເລກທີ່ໃບອະນຸຍາດໃສ່)
6. ກົດຕິກເລືອກເອົາແຖວຂອງໃບອະນຸຍາດ → ຈາກນັ້ນໃຫ້ປ້ອນຫົວໜ່ວຍ (ຈຳນວນ) ທີ່ຕ້ອງການເຊື່ອມໂຍງໃສ່
7. ກົດໃສ່ປຸ່ມສົ່ງ , (ເພື່ອເຊື່ອມໂຍງ TD ໃສ່ກັບໃບອະນຸຍາດນຳເຂົ້າທາງດ້ານເຕັກນິກຂອງຍານພາຫະນະ)



ສິ່ງສຳຄັນ ທີ່ຜູ້ປະກອບການ, ຜູ້ຂົນສົ່ງ ແລະ ຕົວແທນຊິບປິ້ງຕ້ອງຮູ້:

- ✓ ຫຼັງຈາກກົດປຸ່ມສົ່ງ ຂໍ້ມູນຂອງ SD ແລະ ໃບອະນຸຍາດຈະຫາຍໄປ (ສະແດງວ່າເຊື່ອມໂຍງສຳເລັດແລ້ວ) ຖ້າຕ້ອງການເຊື່ອມໂຍງອີກ ໃຫ້ປ້ອນເລກ SD ໃສ່ຄືນແລ້ວເຊື່ອມໃໝ່ອີກຈົນສຳເລັດ (ຖ້າ SD ໜຶ່ງມີຫຼາຍ TD)
- ✓ ຖ້າເປັນໃບອະນຸຍາດທີ່ໃຊ້ໄດ້ຄັ້ງດຽວແມ່ນເຊື່ອມໂຍງເລີຍບໍ່ຈຳເປັນຕ້ອງປ້ອນຈຳນວນ
- ✓ **ລະວັງ!** ກ່ອນຈະກົດໃສ່ປຸ່ມສົ່ງ ອີກເທື່ອທີ່ສອງກະລຸນາກວດເບິ່ງຫົວໜ່ວຍ (ຈຳນວນ) ຂອງໃບອະນຸຍາດກ່ອນເພື່ອແນ່ໃຈວ່າຫົວໜ່ວຍຂອງໃບອະນຸຍາດຖືກນຳໃຊ້ແລ້ວຫຼືບໍ່ ແລະ ທ່ານຕ້ອງການທີ່ຈະເຊື່ອມໂຍງອີກຄັ້ງແທ້ບໍ່ ?

2.2 ການຍົກເລີກການເຊື່ອມໂຍງກໍລະນີເຊື່ອມໂຍງຜິດ

ກໍລະນີທີ່ທ່ານເຊື່ອມໂຍງເອກະສານຜິດ ຫຼື ຫຼົງເຊື່ອມໂຍງເກີນຈຳນວນ. ຖ້າໃບ ບ ຂອງທ່ານຍັງບໍ່ໄດ້ປິດສີ ທ່ານກໍ່ຍັງສາມາດແກ້ໄຂໄດ້ສະເໝີ ໂດຍປະຕິບັດຕາມຂັ້ນຕອນລຸ່ມນີ້:

1. ກົດໃສ່ ໃບອະນຸຍາດ



2. ກົດໃສ່ ໃບອະນຸຍາດກົດ_>ການຄົ້ນຫາໃບອະນຸຍາດ
3. ປ້ອນເລກທີ່ໃບອະນຸຍາດ
4. ກົດໃສ່ ຄົ້ນຫາ
5. ກົດເລືອກ ຜົນການຄົ້ນຫາ _>ກົດໃສ່ປຸ່ມ



6. ກົດເລືອກ TD ທີ່ຕ້ອງການຍົກເລີກການເຊື່ອງໂຍງ_>ກົດໃສ່ ປຸ່ມ (ສົ່ງການສະເໜີຂໍອະນຸຍາດ)



ໝາຍເຫດ:

- ຫຼັງຈາກຍົກເລີກການເຊື່ອງໂຍງແລ້ວ ຕ້ອງໄປເຊື່ອມໂຍງຄືນໃໝ່ກັບໃບອະນຸຍາດທີ່ຖືກຕ້ອງ
- ຖ້າໄດ້ເອົາເອົາສິນຄ້າອອກໄປແລ້ວຈະບໍ່ສາມາດຍົກເລີກການເຊື່ອມໂຍງໄດ້ອີກ

2.3 ການຄັດຕິດເອກະສານອື່ນໆໃສ່ TD

ຖ້າເປັນສິນຄ້າທົ່ວໄປທີ່ບໍ່ໄດ້ເຊື່ອມໂຍງໃບອະນຸຍາດ ຜູ້ປະກອບການຈຳເປັນຕ້ອງໄດ້ຄັດຕິດໃບ Packing ແລະ Invoice ໃສ່ທຸກຄັ້ງກ່ອນຈະໄປຍື່ນໃບ ບ

1. ໃຫ້ກົດໃສ່ “ເອກະສານຂົນສົ່ງສິນຄ້າ” →ແລ້ວຈາກນັ້ນຈຶ່ງກົດໃສ່ **ຄັດຕິດເອກະສານໃສ່ກັບໃບ TD**
2. ປ້ອນເລກທີ SD ໃສ່ຫ້ອງ “ເລກທະບຽນໃບ SD”
3. ກົດໃສ່ “ຄົ້ນຫາ TD”

4. ເລືອກອັນດັບ TD
5. ກົດໃສ່ “ຄົ້ນຫາ”



6. ກົດໃສ່ (ເຄື່ອງໝາຍບວກ) ເພື່ອເພີ່ມແຖວເອກະສານ
7. ກົດໃສ່ເຄື່ອງໝາຍສີແດງເພື່ອເລືອກເອົາຊື່ເອກະສານທີ່ບັນຈຸຢູ່ໃນຫ້ອງນັ້ນ
8. ກົດໃສ່ “ເພີ່ມໄຟລ์” ເພື່ອອັບໂຫຼດເອກະສານລົງໃນລະບົບ.



9. ກົດໃສ່ປຸ່ມສົ່ງ ເພື່ອຢືນຢັນການຄັດຕິດເອກະສານ



ສິ່ງສຳຄັນທີ່ຜູ້ປະກອບການ, ຜູ້ຂົນສົ່ງ ແລະ ຕົວແທນຊິບປິ້ງຕ້ອງຮູ້:

- ✓ ການຄັດຕິດເອກະສານອື່ນໆ ທີ່ກ່ຽວຂ້ອງໃສ່ກັບTD ນັ້ນແມ່ນຕ້ອງໄດ້ຄັດຕິດ**ຫຼັງຈາກ SD ໄດ້ລົງທະບຽນແລ້ວ (ຕ້ອງຄັດຕິດ**ເອກະສານໃສ່ກ່ອນຈຶ່ງເອົາໃບແຈ້ງໄປຍື່ນໃຫ້ເຈົ້າໜ້າທີ່ພາສີ).

III. ການຕີໃບແຈ້ງພາສີເປັນລາຍລະອຽດຜ່ານລະບົບ NSWA+ ແລະ ກວດກາຄວາມຄາດເຄື່ອນ

3.1 ການຕີໃບແຈ້ງພາສີເປັນລາຍລະອຽດ (ໃບ ບ ຫຼື ACDD)

ກ່ອນຈະຕີໃບແຈ້ງພາສີຕ້ອງໄດ້ເຂົ້າສູ່ລະບົບຜ່ານໜ້າຕ່າງຂອງລະບົບ NSWA+ ຕາມຂັ້ນຕອນລຸ່ມນີ້:

a. ກົດໃສ່ ການແຈ້ງພາສີເປັນລາຍລະອຽດ → ກົດໃສ່ "ລັອກອິນເຂົ້າລະບົບ ອາຊີກູດ້າ"

b. ປ້ອນລະຫັດຜູ້ນຳໃຊ້ ແລະ ລະຫັດຜ່ານໃສ່ (ລະຫັດຂອງລະບົບອາຊີກູດ້າ)

c. ກົດປຸ່ມ ຢືນຢັນ (ເມື່ອຮູ້ວ່າທ່ານເຂົ້າລະບົບແລ້ວຈຶ່ງເລີ່ມຕີຂໍ້ມູນໃບແຈ້ງ)



ໝາຍເຫດ: ຖ້າອິນເຕີເນັດຊ້າ ທ່ານສາມາດຕີຂໍ້ມູນ save ກ່ອນ ແລ້ວຄ່ອຍມາເຂົ້າເພື່ອຍື່ນໃບແຈ້ງເລີຍກໍ່ໄດ້ (ໝາຍຄວາວ່າ ທ່ານສາມາດຕີຂໍ້ມູນຕາມ ຂໍ້ 1- 26 ຂ້າງລຸ່ມນີ້ກ່ອນ ແລ້ວຈຶ່ງມາເຂົ້າຂັ້ນຕອນ a-c ເພື່ອຍື່ນໃບແຈ້ງເລີຍ)

ໃນໜ້າຕ່າງຄົ້ນຫາ TD:

1. ກົດໃສ່ "ຄົ້ນຫາ TD"
2. ປ້ອນເລກທີ SD ໃສ່ຫ້ອງ"ເລກທີ່ໃບຂົນສົ່ງສິນຄ້າ SD"
3. ກົດໃສ່ປຸ່ມ
4. ກົດເລືອກ ຜົນການຄົ້ນຫາ
5. ກົດໃສ່ປຸ່ມ



6. ກົດໃສ່ປຸ່ມ ເພື່ອເລີ່ມປ້ອນຂໍ້ມູນ



7. ກົດເລືອນ ໜ້າຕ່າງລົງລຸ່ມ → ປ້ອນຂໍ້ມູນຫ້ອງເບີ 28 (ຂໍ້ມູນທະນາຄານກ່ອນ)
8. ກົດໃສ່ປຸ່ມ ບັນທຶກ



9. **ໃນໜ້າຕ່າງຂອງຊ່ອງ "SAD Items"** ກົດເລືອກ ລາຍການສິນຄ້າ (ຈະເຫັນມີຫຼາຍລາຍການສິນຄ້າຖ້າ TD ນີ້ມີຫຼາຍລາຍການ)
10. ກົດໃສ່ປຸ່ມ "Display Item" ເພື່ອເພີ່ມຂໍ້ມູນຂອງລາຍການສິນຄ້າ (ຖ້າຕ້ອງການ)



11. ປ້ອນຂໍ້ມູນໃສ່ຫ້ອງ "**ເອກະສານປະກອບ**" ເຊັ່ນ: **CKD, SP, ...** ແລະ ອື່ນໆ
12. ປ້ອນ "ເລກທີ່ແຜນນຳເຂົ້າ" (ຖ້າມີ)
13. ປ້ອນ "ລຳດັບແຜນ" (ຖ້າມີ)

14. ກໍລະນີມີຫຼາຍລາຍການ ຖ້າຕ້ອງການປ້ອນຂໍ້ມູນໃສ່ລາຍການຕໍ່ໄປຄື ຂໍ້ 11- 13 ແມ່ນກົດໃສ່ປຸ່ມ “Next” ຕໍ່ໄປເລີຍ ຫຼື ກົດໃສ່ ປຸ່ມ “Previous” ເພື່ອກັບຄືນໄດ້.

15. ກົດໃສ່ປຸ່ມ ບັນທຶກ (ເພື່ອບັນທຶກຂໍ້ມູນ ແລະ ປິດໜ້ານີ້)

ໝາຍເຫດ (ຫມ): ປ້ອນລະຫັດຄຸ້ມຄອງມູນຄ່າແจ້ງ (ຖ້າມີ TSC)



16. **ໃນໜ້າຕ່າງຂອງຊ່ອງ “Attachment document”** ກົດໃສ່ປຸ່ມ “Add” ເພື່ອເປີດໜ້າຕ່າງເພີ່ມເລກທີເອກະສານຂັດຕິດ
17. ເລືອກ ຊື່ເອກະສານ, ປ້ອນເລກທີ ແລະ ວັນທີເອກະສານ ໃສ່
18. ເລືອກເອົາທັງໝົດ ຫຼື ເລືອກເທື່ອລະລາຍການ (ຖ້າໃບແຈ້ງຊຸດນີ້ມີຫຼາຍລາຍການ ລະບົບຈະສະແດງໃຫ້ເຫັນທີ່ນີ້)

19. ກົດໃສ່ປຸ່ມ ບັນທຶກ (ເພື່ອບັນທຶກຂໍ້ມູນ ແລະ ປິດໜ້ານີ້)



20. ຫຼັງຈາກກົດບັນທຶກຈະເຫັນລາຍການຂອງເອກະສານຂຶ້ນມາ (ຖ້າຕ້ອງການເພີ່ມອີກໃຫ້ປະຕິບັດຕາມ ຂໍ້ 16 – 19 ອີກຄັ້ງ ຈົນສຳເລັດ)



21. ໃນໜ້າຕ່າງຂອງຊ່ອງ “Attachment document” ກົດໃສ່ປຸ່ມ “ ” ເພື່ອເພີ່ມຊ່ອງເອກະສານ
22. ກົດໃສ່ ເຄື່ອງໝາຍສີແດງເພື່ອເລືອກຊື່ເອກະສານ
23. ກົດໃສ່ປຸ່ມ “ເພີ່ມໄຟລ์” ເພື່ອເປີດໜ້າຕ່າງ

24. ກົດໃສ່ຫ້ອງ "ຊື່ເອກະສານ" ເພື່ອເລືອກເອກະສານ ທີ່ຕ້ອງການ
25. ກົດປຸ່ມ ເພື່ອແນບເອກະສານໃສ່



26. ກົດໃສ່ປຸ່ມ ບັນທຶກ ເພື່ອບັນທຶກຂໍ້ມູນທີ່ປ້ອນທັງໝົດອີກຄັ້ງ
27. ກົດໃສ່ປຸ່ມ ເພື່ອກວດກາຂໍ້ມູນກ່ອນຢືນຢັນ (ຢ່າລືມກວດເບິ່ງມູນຄ່າພາສີອາກອນອີກຄັ້ງ)
28. ກົດໃສ່ປຸ່ມ ເພື່ອຢືນຢັນລົງທະບຽນໃບແຈ້ງ **(ຖ້າຍັງບໍ່ໝັ້ນໃຈ ຢ່າຝ້າວກົດປຸ່ມນີ້)**



3.2 ການຄົ້ນຫາໃບແຈ້ງພາສີເປັນລາຍລະອຽດ (ໃບ ບ ຫຼື ACDD)

1. ກົດໃສ່ປຸ່ມ ຄົ້ນຫາເລກທີ່ໃບແຈ້ງ
2. ເລືອກວັນທີ ທີ່ຕ້ອງການ
3. ກົດປຸ່ມຄົ້ນຫາ
4. ກວດເບິ່ງຜົນການຄົ້ນຫາ ລະບົບຈະສະແດງເລກທີ່ໃບແຈ້ງ



3.3 ການກວດຄວາມຄາດເຄື່ອນຂອງຂໍ້ມູນ

1. ມີຄວາມຈຳເປັນຕ້ອງກວດເບິ່ງວ່າມີຄວາມຄາດເຄື່ອນຂອງຂໍ້ມູນລະຫວ່າງ NSWA+ ແລະ ASYCUDA ຫຼື ບໍ ກ່ອນຈະເອົາໃບ ບ ໄປຍື່ນ
2. ກໍລະນີເຫັນວ່າຍັງມີຄວາມຄາດເຄື່ອນຢູ່ ຈຳເປັນຕ້ອງແກ້ໄຂຂໍ້ມູນກ່ອນ ຫຼັງຈາກແກ້ໄຂຂໍ້ມູນແລ້ວ ຈຶ່ງຍື່ນໃບ ບ (ACDD) ເພາະຖ້າຄວາມຄາດເຄື່ອນຍັງບໍ່ຖືກແກ້ໄຂເຈົ້າໜ້າທີ່ພາສີຈະບໍ່ເຂົ້າສີ ແລະ ຈະບໍ່ຮອງຮອງໃຫ້ ຈະເຮັດໃຫ້ທ່ານເສຍເວລາ ຫຼື ວ່າຮັບຮອງສີໃຫ້ກໍ່ຕາມ ທ່ານຈະບໍ່ສາມາດຊຳລະຄ່າພາສີອາກອນໄດ້ (ລະບົບ NSWA+ ຈະລັອກບໍ່ອອກບິນໃຫ້)

ການກວດກາຄວາມຄາດເຄື່ອຂອງຂໍ້ມູນໃຫ້ປະຕິບັດຕາມຂັ້ນຕອນລຸ່ມນີ້:

1. ກົດໃສ່ເບິ່ງຂໍ້ມູນການປ່ຽນແປງ(Print Discrepancies)

2. ປ້ອນເລກທີ່ SD ໃສ່ຫ້ອງເລກທີ່ SD

3. ກົດໃສ່ປຸ່ມພິມລາຍການ (Print List) ຫຼັງຈາກໄດ້ປ້ອນຂໍ້ມູນໃສ່



4. ກວດເບິ່ງຄວາມຄາດເຄື່ອນຂອງຂໍ້ມູນໃນໄຟລ້ Excel

ຕົວຢ່າງຂອງໄຟລ້ Excel:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
Lao People's Democratic Republic
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
Peace Independence Democracy Unity Prosperity

Discrepancy Date From :

General information				TD Reference		SD status
No.	SAD reference number	Discrepancy Date&Time	Discrepancy type	TD ID (ACDD)	TD in Manifest (LNSW)	SD status (LNSW)
1	R5C10_2022_I_475	2022-03-04 14:25:02	ໃບອະນຸຍາດ ບໍ່ພຽງພໍ	22R1CRI000008212_03030000001	22R1CRI000008212_03030000001	

ໝາຍເຫດ:

SD ແລະ TD ໃດທີ່ບໍ່ໄດ້ສະແດງ ຫຼືບໍ່ມີຂໍ້ມູນໃນໄຟລ້ (ໃນໄຟລ້ Excel ຫວ່າງເປົ່າ) ສະແດງວ່າຂໍ້ມູນການແຈ້ງ, ເອກະສານຂົນສົ່ງແລະສິນຄ້າມີຄວາມຖືກຕ້ອງແລ້ວ.

ກໍລະນີຂໍ້ມູນມີຄວາມຄາດເຄື່ອນ ຂໍ້ມູນທີ່ຕ້ອງໄດ້ກວດສອບໃບລະບົບ NSWA+ ແລະ ຕ້ອງໄດ້ແກ້ໄຂ:

#	ປະເພດຄວາມຄາດເຄື່ອນ	ເຫດຜົນຄວາມຄາດເຄື່ອນ	ວິທີກວດສອບຄວາມຄາດເຄື່ອນ
1	ຂໍ້ມູນຂອງຜູ້ນຳເຂົ້າບໍ່ຕົງກັນ (Consignee Mismatch)	ໝາຍຄວາມວ່າ ຜູ້ແຈ້ງພາສີປ້ອນຂໍ້ມູນ ຜູ້ນຳເຂົ້າ ໃສ່ TD ຫຼື ໃບແຈ້ງພາສີເປັນລາຍລະອຽດບໍ່ຕົງກັນກັບຂໍ້ມູນໃນໃບອະນຸຍາດ (NSWA+)	ຄວາມຄາດເຄື່ອນນີ້ຈະສະແດງຂຶ້ນມາ ຖ້າຜູ້ປະກອບການໄດ້ມອບສິດໃຫ້ບໍລິສັດຊິບປິ່ງເປັນຜູ້ແຈ້ງແທນ (ໝາຍຄວາມວ່າ ໃບອະນຸຍາດຜູ້ຂໍນຳເຂົ້າແມ່ນຜູ້ປະກອບການ ແຕ່ເວລາໄປແຈ້ງແມ່ນບໍລິສັດຊິບປິ່ງ) ເວລາຊິບປິ່ງປ້ອນຂໍ້ມູນ TD ຊິບປິ້ງ ບໍ່ໃສ່ເລກ TIN ຂອງຜູ້ນຳເຂົ້າ
2	ຍັງບໍ່ມີ TD ໃນລະບົບ (Not existing TD)	ໝາຍຄວາມວ່າ ຜູ້ແຈ້ງພາສີໄດ້ໃຊ້ເລກທີ TD ບໍ່ຖືກຕ້ອງ ໃສ່ໃບແຈ້ງພາສີເປັນລາຍລະອຽດ ສະນັ້ນລະບົບຈຶ່ງບອກວ່າບໍ່ມີຂໍ້ມູນຂອງ TD ດັ່ງກ່າວໃນລະບົບ NSWA+ **(ການຕີໃບແຈ້ງຜ່ານລະບົບ NSWA+ ໂດຍກົງຈະບໍ່ພົບບັນຫານີ້)**	ຄວາມຄາດເຄື່ອນນີ້ສະແດງຂຶ້ນ ຖ້າຜູ້ແຈ້ງພາສີ ຫຼົງໃຊ້ຂໍ້ມູນທີ່ຜິດ (ທີ່ເປັນ TD ທີ່ຖືກຍົກເລີກ ຫຼື TD ເກົ່າທີ່ໄດ້ແຈ້ງຜ່ານໄປແລ້ວ)

3	ໃບອະນຸຍາດບໍ່ຖືກຕ້ອງ ຫຼື ໃບອະນຸຍາດບໍ່ພຽງພໍ (Permit inadequate)	ໝາຍຄວາມວ່າ ຜູ້ປະກອບການປ້ອນເລກທີ່ໃບອະນຸຍາດ ແລະ ເຊື່ອມໂຍງໃບອະນຸຍາດບໍ່ຖືກຕ້ອງ ຫຼື ບໍ່ໄດ້ເຊື່ອມໂຍງໃບອະນຸຍາດກັບ TD ນີ້	1. TD ນີ້ຍັງບໍ່ໄດ້ເຊື່ອມໂຍງໃບອະນຸຍາດ (ຜູ້ປະກອບການຕ້ອງເຊື່ອມໂຍງກ່ອນ) 2. ອາດເຊື່ອມໂຍງແລ້ວ ແຕ່ເຊື່ອມໂຍງໃສ່ໃບອະນຸຍາດທີ່ຜິດ (ຕ້ອງແກ້ໄຂກ່ອນ) 3. ອາດເຊື່ອມໂຍງແລ້ວ ແຕ່ລະຫັດສິນຄ້າທີ່ປ້ອນໃສ່ໃບ ບ ແລະ ໃນໃບອະນຸຍາດບໍ່ຄືກັນ. **ກ.** ກໍລະນີແບບນີ້ຖ້າຜິດກັບໃບອະນຸຍາດແມ່ນຕ້ອງພົວພັນພາກສ່ວນກ່ຽວຂ້ອງ. **ຂ.** ຖ້າຜິດຢູ່ໃນໃບ ບ ໃຫ້ພົວພັນເຈົ້າໜ້າທີ່ພາສີເພື່ອດັດແກ້ໃຫ້.
4	ສະຖານະຂອງ SD ບໍ່ຖືກຕ້ອງ (SD status inadequate)	ໝາຍຄວາມວ່າ SD ທີ່ຍັງບໍ່ທັນລົງທະບຽນ ຫຼື ຜູ້ປະກອບການຍັງບໍ່ທັນມີ SD ນີ້ໃນລະບົບ ຫຼື ອາດຈະປ້ອນ TD ຜິດ	ຄວາມຄາດເຄື່ອນນີ້ຈະສະແດງຂຶ້ນເມື່ອ: 1. SD ຍັງບໍ່ໄດ້ລົງທະບຽນ (ກໍລະນີນີ້ ຜູ້ປະກອບການຕ້ອງລົງທະບຽນ SD ກ່ອນ) 2. ຫຼື ຜູ້ປະກອບການອາດຈະຫຼົງໃຊ້ SD ທີ່ຖືກຍົກເລີກແລ້ວ
5	TD ຖືກຮັບຮອງແລ້ວ / ໄດ້ຈອງໄວ້ແລ້ວ (TD already reserved)	ໝາຍຄວາມວ່າ: ໃບແຈ້ງຊຸດນີ້ ໃຊ້ເລກທີ່ TD ຊ້ຳເລກທີ່ເກົ່າ	ຄວາມຄາດເຄື່ອນນີ້ຈະສະແດງຂຶ້ນເມື່ອ: 1. ຜູ້ແຈ້ງພາສີໃຊ້ເລກທີ່ TD ຊ້ຳເລກທີ່ເກົ່າ ກໍລະນີນີ້ແມ່ນຕ້ອງແກ້ໄຂ ເລກທີ່ TD ຂອງຊຸດທີ່ຜິດ ໂດຍໃສ່ໂຕທີ່ຖືກໃສ່. 2. ຜູ້ແຈ້ງພາສີຍົກເລີກຊຸດ ບ ທີ່ຕົກກ່ອນໜ້ານີ້ແລ້ວພະຍາຍາມຕົ້ນ ຊຸດທີ່ສອງ (ເພື່ອແກ້ໄຂຂໍ້ມູນບາງຢ່າງ) ຖ້າເປັນກໍລະນີນີ້ໃຫ້ແຈ້ງທີມງານ NSWA+
6	TD/SD ຖືກລັອກ (TD/SD Lock)	ໝາຍຄວາມວ່າ SD/TD ທີ່ນຳມາແຈ້ງນັ້ນຖືກລະບົບລັອກແລ້ວ.	1. ມັນອາດຈະຖືກລັອກໂອໂຕຈາກລະບົບ ເນື່ອງຈາກວ່າຜູ້ປະກອບການສ້າງໄວ້ດົນເກີນໄປ (ເອົາສິນຄ້າເຂົ້າມາຊ້າເກີນ ອິງໃສ່ເວລາທີ່ກຳນົດ) ກໍລະນີນີ້ແມ່ນຜູ້ສັ່ງການເອກສາມາດປົດລັອກໃຫ້ໄດ້ ຫຼື ໂທຫາທີມງານ NSWA+ 2. ເມື່ອເຫັນຜິດປົກກະຕິ / ຫຼື ເຫັນວ່າສິນຄ້າມີຄວາມສ່ຽງຜູ້ສັ່ງການເອກຈະລັອກ TD ໄວ້ ຖ້າເປັນກໍລະນີແບບນີ້ ຈະບໍ່ສາມາດແຈ້ງໄດ້ຈົນກວດຜູ້ສັ່ງການເອກຈະປົດລັອກ (ກໍລະນີນີ້ ທີມງານ NSWA+ ຈະບໍ່ສາມາດແກ້ໄຂໄດ້)
7	ນ້ຳໜັກບໍ່ຕົງກັນ (Weight mismatch)	ໝາຍຄວາມວ່າ ຜູ້ນຳເຂົ້າ / ຜູ້ສົ່ງອອກປ້ອນນ້ຳໜັກຂອງສິນຄ້າຜິດດ່ຽງກັນລະຫວ່າງ NSWA+ ແລະ ASYCUDA **(ການຕີໃບແຈ້ງຜ່ານລະບົບ NSWA+ ໂດຍກົງຈະບໍ່ພົບບັນຫານີ້)**	1. ຖ້າຜິດໃນໃບ ບ ແມ່ນຜູ້ປະກອບການຕ້ອງແກ້ໄຂຜ່ານເຈົ້າໜ້າທີ່ພາສີທີ່ຮັບການມອບໝາຍ ເພື່ອແກ້ໄຂການປ້ອນຂໍ້ມູນຜິດ 2. ຖ້າຜິດໃນ TD ແມ່ນຜູ້ສັ່ງການເອກສາມາດແກ້ໄຂໄດ້ຜ່ານລະບົບ NSWA+ ໃນ TD ນັ້ນໆ ຫຼື ສາມາດໂທແຈ້ງທີມງານ NSWA+.
8	ຈຳນວນຫີບຫໍ່ບໍ່ຕົງກັນ (Number of package mismatch)	ໝາຍຄວາມວ່າ ຜູ້ນຳເຂົ້າ / ຜູ້ສົ່ງອອກປ້ອນຈຳນວນສິນຄ້າຜິດດ່ຽງກັນລະຫວ່າງ NSWA+ ແລະ ASYCUDA	1. ຖ້າຜິດໃນໃບ ບ ແມ່ນຜູ້ປະກອບການຕ້ອງແກ້ໄຂຜ່ານເຈົ້າໜ້າທີ່ພາສີທີ່ຮັບການມອບໝາຍ ເພື່ອແກ້ໄຂການປ້ອນຂໍ້ມູນຜິດ 2. ຖ້າຜິດໃນ TD ແມ່ນຜູ້ສັ່ງການເອກສາມາດແກ້ໄຂໄດ້ຜ່ານລະບົບ NSWA+ ໃນ TD ນັ້ນໆ ຫຼື ສາມາດໂທແຈ້ງທີມງານ NSWA+.

9	- ໃບອະນຸຍາດບໍ່ພຽງພໍ (Permit inadequate) - ໄດ້ຈອງໄວ້ແລ້ວ (TD already reserved) - ນ້ຳໜັກບໍ່ຕົງກັນ (Weight mismatch) - ຈຳນວນຫີບຫໍ່ບໍ່ຕົງກັນ (Number of package mismatch)	ກໍລະນີທີ່ມີຂໍ້ມູນຄວາມຄາດເຄື່ອນອອກມາທັງໝົດນຳກັນແບບນີ້ ໝາຍຄວາມວ່າ ຜູ້ນຳເຂົ້າ / ຜູ້ສົ່ງອອກໄດ້ປ້ອນຈຳນວນສິນຄ້າໃສ່ໃນລະບົບ NSWA+ ເປັນ 1 TD ຕໍ່ຫຼາຍລາຍການ (ຫຼາຍ LP) ແຕ່ຜູ້ປະກອບການເລືອກຕົວ ໃບ ບ ເປັນ 1 ຊຸດຕໍ່ 1 ລາຍການ (1 ຊຸດ/1 LP)	ຖ້າຜູ້ປະກອບການເລືອກຕົວ ໃບ ບ 1 ຊຸດຕໍ່ 1 ລາຍການ / 1LP. ແຕ່ໃນ 1TD ມີຫຼາຍ ລາຍການ. ສະແດງວ່າ ກໍລະນີແບບນີ້ບໍ່ຜ່ານ (ກໍລະນີນີ້ ໃຫ້ຕິດຕໍ່ຫາທີມງານ NSWA+ ເພື່ອ ແກ້ໄຂ) **ຕົວຢ່າງ:** SD ມີ 1TD ແຕ່ໃນນັ້ນມີ 10 LP (ລົດຈັກ 10 ຄັນ). ຖ້າຜູ້ນຳເຂົ້າເລືອກຕົວ ໃບ ບ ເປັນ 1ຊຸດ ຕໍ່ຄັນ ແທນທີ່ຈະຕົ 1 ຊຸດຕໍ່ 10ຄັນ, ກໍລະນີແບບນີ້ ລະບົບຈະສະແດງຄວາມຄາດເຄື່ອນອອກມາທັງໝົດແບບນີ້. **ໝາຍເຫດ:** - 1TD ສາມາດມີ 1-99 ລາຍການຖ້າເປັນສິນຄ້າທົ່ວໄປ (ເພາະສິນຄ້າທົ່ວໄປສາມາດແຈ້ງໄດ້ 1-99 ລາຍການ/ຊຸດ) - 1TD ສາມາດມີ 1-10 ລາຍການຖ້າເປັນສິນຄ້າ ລົດຈັກ (ເພາະສິນຄ້າລົດຈັກສາມາດແຈ້ງໄດ້ 1-10 ລາຍການ/ຊຸດ) - 1TD ຈະມີ 1 ລາຍການເທົ່ານັ້ນ ຖ້າເປັນສິນຄ້າ ລົດ (ເພາະສິນລົດໃຫຍ່ສາມາດແຈ້ງໄດ້ 1 ລາຍການ/ຊຸດ)

3.4 ການລົງລາຍເຊັນເອເລັກໂທຣນິກ

ການລົງລາຍເຊັນເອເລັກໂທຣນິກ ແມ່ນມີຂັ້ນຕອນດັ່ງນີ້:

1. ກົດໃສ່ ການລົງລາຍເຊັນເອເລັກໂທຣນິກ (ຂ້າງຊ້າຍມື)
2. ກົດເລືອກວັນທີ
3. ຈະສັງເກດເຫັນສະຖານະຂອງ ໃບແຈ້ງ "ລົງທະບຽນແລ້ວ"
4. ກົດໃສ່ 1 ຄັ້ງເພື່ອເປີດໜ້າຕ່າງຈະເຂົ້າໄປຢືນຢັນ



5. ກົດເລື່ອນໜ້າຕ່າງລົງ → ກົດໃສ່ປຸ່ມ ອະນຸມັດ
6. ກົດໃສ່ປຸ່ມ ຕົກລົງ

7. ຫຼັງຈາກກົດໃສ່ປຸ່ມ ຕົກລົງ ສຳເລັດຈະສັງເກດເຫັນສະຖານະຂອງ ໃບແจ້ງປ່ຽນເປັນ ລໍຖ້າອະນຸມັດ **(ຖືວ່າສຳເລັດ)**
8. ເມື່ອສັງເກດເຫັນສະຖານະຂອງ ໃບແจ້ງປ່ຽນເປັນ ຜ່ານການປະເມີນ **(ໝາຍຄວາມວ່າ ເจົ້າໜ້າທີ່ພາສີໄດ້ລົງລາຍເຊັນ ຫຼື ໄດ້ຮັບຮອງ ຫຼື ໄດ້ປົດສີແລ້ວ)**
9. ຖ້າກົດເປີດເບິ່ງ (ຈະສາມາດກວດໄດ້າສະຖານະ ຫຼື ປະຫວັດຂອງໃບແจ້ງພາສີຊຸດນີ້)



10. ລາຍລະອຽດຂອງປະຫວັດ (ຕາມສະຖານະ):
- 1. Validate / ລົງທະບຽນແລ້ວ = ໝາຍຄວາມວ່າ ຜູ້ປະກອບການຍື່ນໃບແจ້ງພາສີ (ຫຼື ຢືນຢັນເອົາເລກທີ່ແລ້ວ)
- 2. Document Submitted / SUBMITTED = ໝາຍຄວາມວ່າ ຜູ້ປະກອບການໄດ້ລົງລາຍເຊັນເອເລັກໂທຣນິກແລ້ວ
- 3. Assess Registered / ລົງທະບຽນແລ້ວ = ໝາຍຄວາມວ່າ ເจົ້າໜ້າທີພາສີໄດ້ກວດຮັບເອກະສານ ແລະ ປະເມີນຄວາມສ່ຽງ (ເຂົ້າສີ) ແລ້ວ
- 4. Re-Route to green / ລົງທະບຽນແລ້ວ = ໝາຍຄວາມວ່າ ເจົ້າໜ້າທີພາສີໄດ້ຢືນຢັນການກວດການຂໍ້ມູນກັບສິນຄ້າ (ໄດ້ປ່ຽນສີເປັນສີຂຽວ) ແລ້ວ
- 5. Assess from Selected standby / ຜ່ານການປະເມີນ = ໝາຍຄວາມວ່າ ເจົ້າໜ້າທີພາສີໄດ້ຮັບຮອງເອກະສານ (ປົດສີ) ແລ້ວ



IV. ໃບສະຫຼຸບການເກັບເງິນ SOI / Billing

- ຫຼັງຈາກເຈົ້າໜ້າທີ່ພາສີໄດ້ສຳເລັດການຮັບຮອງສີ ຫຼື ປົດສີແລ້ວ ລະບົບຈະອອກໃບສະຫຼຸບການເກັບເງິນ ໃນລະບົບ (ແລະ ຈະສົ່ງແຈ້ງຜ່ານທາງອີເມ໌ວ ທັນທີ)
- ທ່ານສາມາດໄປຊຳລະເງິນໂດຍຜ່ານທະນາຄານໄດ້ທີ່ BCEL (1) ດ້ວຍເງິນສົດ Cash; (2) ດ້ວຍແຊັກ Cheque; (3) ດ້ວຍການໂອນ Transfer ດ້ວຍ BCEL One; (4) ດ້ວຍລະບົບ I-Banking; (5) ດ້ວຍລະບົບ Smart Tax;
- ທ່ານສາມາດໄປຊຳລະເງິນໂດຍຜ່ານທະນາຄານໄດ້ທີ່ LDB (1) ດ້ວຍເງິນສົດ Cash; (2) ດ້ວຍແຊັກ Cheque; (3) ດ້ວຍການໂອນ Transfer ດ້ວຍ LDB Trust; (4) ດ້ວຍລະບົບ Fast Tax;
- ຫຼັງຈາກໄດ້ຊຳລະເປັນທີ່ຮຽບຮ້ອຍ ທ່ານຈຶ່ງສາມາດດຳເນີນຂັ້ນຕອນການແຈ້ງເພື່ອເອົາສິນຄ້າອອກ ຫຼື ປ່ອຍລົດ ໄດ້.
- ໃບສະຫຼຸບການເກັບເງິນ SOI ຈະລວມມີ:
  (1) ຄ່າທຳນຽມໃບອະນຸຍາດນຳເຂົ້າຈາກ ກະຊວງອຸສາຫະກຳແລະ ການຄ້າ (ຖ້າມີ)
  (2) ຄ່າທຳນຽມໃບອະນຸຍາດດ້ານເຕັກນິກຈາກ ກະຊວງໂยທາທິການ ແລະ ຂົນສົ່ງ (ຖ້າມີ)
  (3) ຄ່າພາສີ, ຄ່າອາກອນຊົມໃຊ້ ແລະອາກອນມູນຄ່າເພີ່ມ
  (4) ຄ່າທຳນຽມຂອງ ASYCUDA
  (5) ຄ່າທຳນຽມຂອງ NSWA+

ໝາຍເຫດ: ໃບສະຫຼຸບການເກັບເງິນSOI ນັ້ນບໍ່ໄດ້ລວມເອົາຄ່າຈອດລົດແລະຄ່າຝາກສາງ

ຕົວຢ່າງຂອງອີເມ໌ວແຈ້ງເຕືອນ


SOI [220304000001] – Pending payment

From: noreply@laonsw.net
To: vinnavath sonethavong
March 4, 2022 2:55 PM

print_invoice.pdf (38.2 KB) Download | Briefcase | Remove

ສະບາຍ ດ ABC EXPORT-IMPORT LTD,ABC15 Test,ABC EXPORT-IMPORT LTD,ABC EXPORT-IMPORT LTD

ອີເມວສະບັບນີ້ສົ່ງມາເພື່ອເປັນການຢືນຢັນໄດ້ຕ່າງໄດ້ຮັບຊຳລະວ່າ

ໃບສະຫຼຸບໃບອັນວອຍ (Summary of Invoice) 220304000001 **ໄດ້ຖືກ**ອອກ**ໃຫ້ເປັນທີ່ສົມບູນແລ້ວ (ສະຖານະ "ລໍຖ້າການຊຳລະ".**

ໃບສະຫຼຸບໃບອັນວອຍ (Summary of Invoice) ໄດ້ຄັດຫັດ ຄ່ານ້ຳອີເມວສະບັບນີ້ແລ້ວ. ຕ່ານ

ສາມາດຄາວโหลดໄດ້ໃນລະບົບຂອງLNSW.

ຕ່ານສາມາດດຳເນີນການຊຳລະຄ່າຕ່ານເງິນທີ່ກ່ຽວຂ້ອງນີ້ໄດ້ທີ່ຫະນາຄານ

ຂໍ້ຂອບໃຈ

ບໍລິສັດ ຮ່ວມມືລະຫວ່າງລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຈຳກັດ
ຖະໜົນໝອງບອນ, ຄົວກວຽວ, ຮ້ານ 3
ໝ່ວຍ41, ເຮືອນເລກທີ 429, ບ້ານນາໄຊ, ເມືອງໄຊເສດຖາ
ນະຄອນຫລວງວຽງຈັນ, ສປປ ລາວ
ໂທ: 030 777 6699
ອີເມວ: helpdesk@laonsw.net

4.1 ວິທີການກວດເບິ່ງໃບສະຫຼຸບການເກັບເງິນ SOI ໃນ NSWA+

1. ກົດໃສ່ “ການອອກໃບບິນ”



2. ກົດໃສ່ “ໃບອິນວອຍ” →ກົດ “ໜ້າຈໍການຄົ້ນຫາ” ລະບົບຈະກຳນົດວັນທີເລີ່ມຕົ້ນເປັນວັນທີ ທີ່ຄົ້ນຫາສະເໝີ
3. ດ້ວຍການກົດໃສ່ປຸ່ມ (ຄົ້ນຫາ) ທ່ານຈະສາມາດເຫັນລາຍການຂອງໃບສະຫຼຸບການເກັບເງິນທັງໝົດ



4. ທ່ານສາມາດຄົ້ນຫາດວ້ຍຄຳສັ່ງຕາມຄວາມຕ້ອງການ(ຕົວຢ່າງ: ຄົ້ນຫາດ້ວຍສະຖານະ, ຕາມວັນທີ, ຕາມເລກທີSD ແລະອື່ນໆ)
5. ກົດເລືອກລາຍການໃບສະຫຼຸບການເກັບເງິນSOI→ກົດໃສ່ (ສະແດງພາບ) ເພື່ອສະແດງກວດເບິ່ງລາຍລະອຽດ



6. ນີ້ແມ່ນລາຍລະອຽດຂອງໃບສະຫຼຸບການເກັບເງິນSOI



7. ກົດໃສ່ປຸ່ມ (ພິມ) ເພື່ອເປີດໜ້າໃບສະຫຼຸບການເກັບເງິນSOI



8. ກ່ອນທີ່ຍັງບໍ່ໄດ້ຊຳລະ ສະຖານະຂອງບິນຈະເປັນ **"ລໍຖ້າການຊຳລະ"** ຫຼັງຈາກຊຳລະແລ້ວສະຖານະຈະປ່ຽນເປັນ **"ຈ່າຍແລ້ວ"**.



ລະບົບແຈ້ງພາສີປະຕູດຽວແຫ່ງຊາດ / Lao National Single Window
ໃບສະຫຼຸບການເກັບເງິນ - ບກງ / Summary of Invoices - SoI
ເລກທີເອກະສານ / Reference Number: 230606000007
ຈ່າຍແລ້ວ

ລະບົບແຈ້ງພາສີປະຕູດຽວແຫ່ງຊາດ / Lao National Single Window
ໃບສະຫຼຸບການເກັບເງິນ - ບກງ / Summary of Invoices - SoI
ເລກທີເອກະສານ / Reference Number: 230606000007
ລໍຖ້າການຊຳລະ

08

ຂໍ້ມູນທົ່ວໄປ / General information

ອອກໃບສະຫຼຸບການເກັບເງິນ ວັນທີ / Issuing Date (Invoice Summary) : 2023-06-06

ໃບສະຫຼຸບການເກັບເງິນໝົດອາຍຸ ວັນທີ / Expiry date (Invoice Summary) : 2023-06-06

ເອກະສານທີ່ກ່ຽວຂ້ອງ / Original document : SAD R5C10_2023_I_149

ເລກທີເອກະສານທີ່ກ່ຽວຂ້ອງ / Originating document ID : 23R1CRI000049034_06060000005

ຜູ້ຊື້ / Buyer (Importer or Exporter)
ຊື່ບໍລິສັດ / COMPANY NAME: import & export company
ເລກປະຈຳຕົວຜູ້ເສຍອາກອນ / TIN: 888012345678
ທີ່�อยู่ / Address: Vientiane capital,Saysetha,Dongdok,kaysone
ປະເທດ / Country: ລາວ
ເບີໂທລະສັບຫ້ອງການ / Office Number: 0302837145
ແຟັກ / Fax Number: 021
ມືຖື / Mobile Number: 0302837145
ອີເມລ / Email address: motortestcompany@yahoo.com

ຜູ້ແຈ້ງ / Declarant
ຊື່ບໍລິສັດ / COMPANY NAME: Motor Import & Export Co.LTD
ເລກປະຈຳຕົວຜູ້ເສຍອາກອນ / TIN: 777012345678
ທີ່ຢູ່ / Address: VTE,Saysetha,Dongdok,23 singha
ປະເທດ / Country: ລາວ
ເບີໂທລະສັບຫ້ອງການ / Office Number: 0302837145
ແຟັກ / Fax Number:
ມືຖື / Mobile Number: 0302837145
ອີເມລ / Email address: motortestcompany@yahoo.com

ລາຍການຄ່າທຳນຽມ Fee Name	ຜູ້ອອກອະນຸຍາດ Issuer	ລາຍລະອຽດສິນຄ້າ Description / Reference	ມູນຄ່າບໍ່ລວມອາກອນ Amount (NET)	ອມຜ VAT 7%	ຈຳນວນເງິນ Total
ພາສີຂາເຂົ້າ	ກົມພາສີ, ກະຊວງການເງິນ	1011938-23R1CRI000049034_06060000005	150,920,000.00		150,920,000.00
ອາກອນນຳໃຊ້	ກົມພາສີ, ກະຊວງການເງິນ	1011938-23R1CRI000049034_06060000005	264,110,000.00		264,110,000.00
ອາກອນມູນ ຄ່າເພີ່ມ	ກົມພາສີ, ກະຊວງການເງິນ	1011938-23R1CRI000049034_06060000005	79,233,000.00		79,233,000.00
ຄ່າບໍລິການຂໍ້ມູນຂະຖິຕິ	ກົມພາສີ, ກະຊວງການເງິນ	1011938-23R1CRI000049034_06060000005	21,200.00		21,200.00
ຄ່າບໍລິການການເກັບເປັນການແຈ້ງພາສີ	ກົມພາສີ, ກະຊວງການເງິນ	1011938-23R1CRI000049034_06060000005	100,000.00		100,000.00
ຄ່າທຳນຽມການນຳໃຊ້ລະບົບແຈ້ງພາສີປະຕູດຽວ	ບໍລິສັດລ່ວມມືດ້ານລະບົບແຈ້ງພາສີປະຕູດຽວ		120,000.00	8,400.00	128,400.00
			ມູນຄ່າລວມອາກອນ / Grand Total		494,512,600.00

ຈຳນວນເງິນທັງໝົດແມ່ນຊຳລະເປັນເງິນກີບລາວ (LAK) / All amounts are in Lao Kip (LAK)

ຄຳປະຕິເສດ: ຂໍ້ມູນຕ່າງໆໃນເອກະສານທີ່ມີນອກສະບັບນີ້ ບໍ່ໄດ້ຖືກຮັບຮອງແຕ່ປະການໃດ, ເພາະສະນັ້ນ ຈຶ່ງບໍ່ມີຜົນໃດໆທາງກົດໝາຍ.
ເປັນພຽງຂໍ້ມູນທີ່ຖືກສະແດງໃນລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW) ທີ່ຍືນຍັນເຖິງສະຖານະພາບທາງການຂອງສິນຄ້າທີ່ກ່ຽວຂ້ອງ. ນອກຈາກນີ້, ໃບສະຫຼຸບການເກັບເງິນນີ້ຍັງເປັນເອກະສານທີ່ເປັນຂໍ້ມູນ ແລະ ບໍ່ໄດ້ປ່ຽນແທນໃບອະນຸຍາດຕ່າງໆທີ່ອອກໃຫ້ໂດຍ ຂະແໜງການສົດຂໍ້ກ່ຽວຂ້ອງ.

Disclaimer: This printed document does not precisely guarantee the information it contains and therefore has no legal value. Only the data displayed in the LNSW system attest to the official status of the concerned goods. Furthermore invoice Summary (IS) is an informative document and does not replace the need of certificates issued by the competent authorities.